## ວັດຖຸປະສົງຂອງພວກເຮົາ

**ການດັດແປງຊີວິດ** ໂດຍການໃຫ້ການອູ້ມຊູແລະການອຸບປະຖຸ້ມການຮ່ວມມືທີ່ໃຫ້ພະລັງແກ່ບຸກຄົນເພື່ອຈະດຳຣົງຊີວິດທີ່ເຂົາເຈົ້າຕ້ອງການ.

## ຄຸນຄ່າຂອງພວກເຮົາ

**ຄວາມນັບຖື** ທີ່ໄດ້ມາຜ່ານການຮັບຮູ້ຢ່າງດີເຖີງຄວາມສຳຄັນຂອງບຸກຄົນທຸກໆຄົນ;

**ການວາງແຜນລວມສູນໃສ່ບຸກຄົນ** ເພື່ອຈະອູ້ມຊູແຕ່ລະຄົນໃຫ້ບັນລຸເປົ້າໝາຍເຕັມທີ່ຂອງເຂົາເຈົ້າ;

**ການປະສານງານຮ່ວມມື** ໂດຍຣະຫວ່າງແລະ ລູກຄ້າ,ຄອບຄົວແລະຜູ້ບໍຣິການ,ເພື່ອວ່າຈະພັດທະນາແລະຮັກສາເອົາໄວ້ການອູ້ມຊແລະການບໍຣິການທີ່ຕ້ອງການແລະ ປະສິງ;

**ການເຂົ້າຮ່ວມນຳຊຸມນຸມຊົນ** ໂດຍການໃຫ້ອຳນາດບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕເພື່ອຈະໃຫ້ເປັນພາກສ່ວນນື່ງຂອງແຮງງານແລະສະມາຊິກມີສ່ວນສ້າງສັງຄົມ.



## ທັສນະວິສັຍຂອງພວກເຮົາ

**ການອູ້ມຊູບຸກຄົນ** ເພື່ອຈະອາສັຍຢູ່ໃນ,ມີສ່ວນຮ່ວມນຳ,ແລະເຂົ້າຮ່ວມຢູ່ໃນຊຸມນຸມຊົນຂອງເຂົາເຈົ້າ;

**ອູ້ມຊູສິ່ງເສີມຕະລອດໄປ** ໃຫ້ແກ່ຄອບຄົວຂອງທັງເດັກນ້ອຍ ແລະຜູ້ໃຫຍ່;

**ການອູ້ມຊູສ່ວນບຸກຄົນ** ໂດຍທີ່ຈະໃຫ້ອຳນາດແກ່ບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕເພື່ອຈະຮູ້ຈັກເຫັນແຈ້ງໃນຄວາມເປັນໄປໄດ້ອັນຍິ່ງໃຫຍ່ຂອງເຂົາເຈົ້າ;

**ກໍ່ຕັ້ງແຜນການອູ້ມຊູອີງຕາມຄວາມຕ້ອງການ** ແລະຄວາມເຂັ້ມແຂງຂອງບຸກຄົນແລະຄອບຄົວ;ແລະ

**ການຊັກຊວນຊຸກຍູ້ບຸກຄົນ, ຄອບຄົວ** ຜູ້ໃຫ້ການບໍຣິການທ້ອງຖິ່ນ,ເພື່ອນຮ່ວມງານຂອງຣັດຖະບານຕາມຊຸມນຸມຊົນແລະພາກສ່ວນກ່ຽວຂ້ອງອື່ນໆເພື່ອຈະສົ່ງເສີມຣະບົບການອູ້ມຊູຂອງພວກເຮົາໃຫ້ດີຂຶ້ນຕະລອດໄປ.

## ຕິດຕໍ່ຫາພວກເຮົາ

ແວ່ປັຽມພວກເຮົາທາງອອນລາຍນ໌ໄດ້ທີ່:
*dshs.wa.gov/dda/service-and-information-request*

ຊອກຫາຫ້ອງການໄດ້ທີ່:
*dshs.wa.gov/DDA/dda/ find-an-office*

ໂທຫາພວກເຮົາ:

| ຄາວຕີ | ໂທຣະສັບ |
|---|---|
| Chelan, Douglas, Ferry, Grant, Lincoln, Okanogan, Pend Oreille, Spokane, Stevens | (800) 319-7116 |
| Adams, Asotin, Benton, Columbia, Franklin, Garfield, Grant, Kittitas, Klickitat, Walla Walla, Whitman, Yakima | (866) 715-3646 |
| Island, San Juan, Skagit, Snohomish, Whatcom | (800) 567-5582 |
| King | (800) 974-4428 |
| Kitsap, Pierce | (800) 735-6740 |
| Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum | (888) 707-1202 |

*ບຸກຄົນຜູ້ທີ່ຕ້ອງການການອູ້ມຊູນຳການຟັງສຽງຫລືການຕິດຕໍ່ສື່ສານສາມາດໂທຫາພະແນກຕິດຕໍ່ການຄົມມະນາຄົມຂອງຣັດວໍຊິງຕັນໄດ້ໂດຍການບີບຫາເລກ7-1-1 ຫລື 1-800-833-6388 (TTY).*

*ມັນເປັນນະໂຍບາຍຂອງກົມ DSHS ວ່າບຸກຄົນຈະບໍ່ຖືກແບ່ງແຍກຊົນຊັ້ນວັນນະໃສ່ (ຢູ່ໃນວຽກງານຫລືການບໍຣິການ) ຍ້ອນວ່າຜິວພັນ,ສີສັນ,ຄວາມເຊື່ອຖື,ສາສະນາ,ເຊື້ອຊາດດັ້ງເດີມ,ຄວາມອຸ່ນອ່ຽງທາງເພດ,ອາຍຸ,ເພດ,ການປາກົດມີຄວາມເສັຽອົງຄະດ້ານຄວາມຮູ້ສຶກ, ຈິດໃຈ ຫລືຮ່າງກາຍ, ການໃຊ້ໝານຳທາງ ຫລື ສັດລ້ຽງບໍຣິການທີ່ຖືກຝຶກຝົນມາໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ ຫລື ສະພາບນັກຣົບເກົ່າ.*

Washington State Department of Social & Health Services
*Transforming lives*

DSHS 22-722 LA(Rev. 9/18) Laotian

# ຄຳຊີ້ນຳໄປສູ່ເງື່ອນໄຂຮັບເອົາການອູ້ມຊູແລະ,ການບໍຣິການ



Washington State Department of Social & Health Services
*Transforming lives*

ພະແນກ **Developmental Disabilities Administration**

## ເງື່ອນໄຂຮັບເອົາຂອງ DDA

ສະມັກຂໍເອົາເງື່ອນໄຂຮັບເອົາຂອງ Developmental Disability Administration (DDA) ຖ້າຫາກວ່າທ່ານຫລືລູກຂອງທ່ານມີສະພາບອັນນຶ່ງຂອງສະພາບຕໍ່ລົງນີ້.

| ເງື່ອນໄຂຮັບເອົາໂດຍອາຍຸ | 0-3 ປ | 4-9 ປ | 10-17 ປ | 18 ປີ ແລະ ແກກວາ |
|---|---|---|---|---|
| ການຊັກຊ້າໃນການຈະເຣີນເຕີບໂຕແນວນຶ່ງ | ✓ | | | |
| ການຊັກຊ້າໃນການຈະເຣີນເຕີບໂຕສາມແນວ ຫລື ຫລາຍກວ່າ | ✓ | ✓ | | |
| ຄວາມເສັຽອົງຄະທາງສະຕິປັນຍາ | | ✓ | ✓ | ✓ |
| ອັມມະພາດມາແຕ່ກຳເນີດ | | ✓ | ✓ | ✓ |
| ໂຣກລົມບ້າຫມູ | | ✓ | ✓ | ✓ |
| ຄວາມຜິດປົກກະຕິທາງການສື່ສານ ແລະ ອາລົມ | | ✓ | ✓ | ✓ |
| ສະພາບຣະບົບປະສາດແນວອື່ນ, ຫລື ສະພາບອື່ນໆທີ່ຄ້າຍຄືກັນກັບຄວາມເສັຽອົງຄະທາງສະຕິປັນຍາ | | ✓ | ✓ | ✓ |

**ເພື່ອຈະຖືກພົບວ່າມີເງື່ອນໄຂໄດ້ຮັບ DDA ທ່ານຕ້ອງ:**

- ເປັນພົລເມືອງຂອງຣັດວໍຊີງຕັນ
- ມີຫລັກຖານຂອງຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕທີ່ມີສິດຊຶ່ງໄດ້ເລີ້ມຕົ້ນກ່ອນອາຍຸ 18 ປີ,ແລະ
- ມີຫລັກຖານຂອງຂອບເຂດທີ່ສຳຄັນ.

ຮຽນຮູ້ເພີ້ມເຕີມກ່ຽວກັບເງື່ອນໄຂຮັບເອົາຂອງ DDA ໄດ້ທີ່: www.dshs.wa.gov/dda/consumers-and-families/eligibility

ເພື່ອຣາຍຣະອຽດເພີ້ມເຕີມ, ແວ່ເຂົ້າຢ້ຽມ
ແວບໄຊທ໌ຂອງ **DDA** ໄດ້ທີ່:
**www.dshs.wa.gov/dda**

## ການບໍຣິການບາງຢ່າງທີ່ DDA ສະເນີໃຫ້ມີຫຍັງແດ່?

- ການເຂົ້າແຊກແຊງນຳໃນຂັ້ນເລີ້ມແຣກສຳລັບເດັກນ້ອຍແຕ່ກຳເນີດຫາສາມປີ
- ການເບິ່ງແຍງດູແລສ່ວນຕົວ ແລະ ການເບິ່ງແຍງດູແລຜ່ອນຄາຍ
- ການເບິ່ງແຍງດູແລບັນເທົາທຸກ
- ການຝຶກຝົນການຄົ້ນຄ້ວາຊອກຫາຄວາມຊຳນານ
- ເທັກໂນໂລຈີຊ່ວຍເຫລືອ
- ການຕອບສະນອງຕໍ່ເຫດການສຸກເສີນສ່ວນຕົວ
- ການຝຶກຝົນເຣື່ອງການຄວບຄຸມເບິ່ງນຳຜູ້ເບິ່ງແຍງດູແລ
- ການບໍຣິການຜັນປ່ຽນຢູ່ຕາມຊຸມນຸມຊົນ
- ການແຕ່ງຕັ້ງນາຍພະຍາບານ
- ການອູ້ມຊູວຽກງານ
- ການເຂົ້າຫາຊຸມນຸມຊົນ
- ການດັດແປງເຮືອນ ແລະ ຍານພາຫານະ
- ອຸບປະກອນ ແລະ ເຄື່ອງໃຊ້ສອຍ
- ອາຫານການກິນພິເສດ ແລະ ເຄື່ອງນຸ່ງ
- ການອູ້ມຊູດ້ານການປຶກສາ ແລະ ການປະພຶດ
- ການພະຍາບານ
- ການເຮັດວຽກນຳຊຸມນຸມຊົນ
- ການບໍຣິການຕາມບ່ອນຢູ່ອາສັຍ
- ການຫລີກເວັ້ນພາວະສຸກເສີນ, ການເຂົ້າແຊກແຊງນຳ ແລະ ການເຮັດໃຫ້ຫຸ່ນທ່ຽງ
- ການວາງແຜນມຸ່ງໃສ່ບຸກຄົນ
- ການລ້ຽງດູລູກຄ້າທີ່ຖືກອູ້ມຊູ
- ການໃຫ້ຄຳປຶກສາຫມູ່ຄູ່

## ການເຂົ້າຮ່ວມນຳຢູ່ໃນການບໍຣິການຂອງ DDA ແມ່ນຕາມສະມັກໃຈ

DDA ພະຍາຍາມຢ່າງຫນັກທີ່ຈະວາງໃຊ້ນະໂຍບາຍສາທາຣະນະຊົນຊຶ່ງຈະສົ່ງເສີມຄຸນຄ່າຂອງບຸກຄົນ, ຄວາມນັບຖືຕົນເອງ,ແລະ ກຽດສັກສີຊຶ່ງແຕ່ລະບຸກຄົນໄດ້ຖືກເຫັນຄຸນຄ່າວ່າເປັນສະມາຊິກທີ່ມີສ່ວນສ້າງສາຊຸມນຸມຊົນ. ເງິນທຶນຂອງຣັດ ແລະ ຣັດຖະບານກາງໄດ້ຖືກໃຊ້ເພື່ອຈະເອົາເອົາໃຫ້ການອູ້ມຊູ ແລະ ການບໍຣິການສຳລັບບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບ ແລະ ຄອບຄົວຂອງເຂົາເຈົ້າ. ແຫລ່ງຊ່ວຍເຫລືອແມ່ນຈຳກັດ ແລະ ການບໍຣິການທີ່ຕ້ອງການອາດຈະບໍ່ມີໄວ້ໃຫ້ຢູ່ສະເມີ.

**ການເຂົ້າເຖິງການບໍຣິການຈະຂຶ້ນນຳ:**

- ການສອດຄ່ອງນຳກົດກຳນົດເງື່ອນໄຂຮັບເອົາສຳລັບການບໍຣິການອັນເຈາະຈົງ,
- ຄວາມຕ້ອງການທີ່ຖືກປະເມີນຜົນເບິ່ງສຳລັບການບໍຣິການ, ແລະ
- ເງິນທຶນທີ່ມີໄວ້ໃຫ້ສຳລັບການບໍຣິການ.



## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

*ຂ້າພະເຈົ້າຈະຮ້ອງຂໍເອົາເງື່ອນໄຂຮັບເອົາ DDA ໄດ້ຢ່າງໃດ ຫລືຖ້າຫາກວ່າຂ້າພະເຈົ້າເປັນລູກຄ້າຂອງ DDA ແລ້ວ, ຂ້າພະເຈົ້າຈະຮ້ອງຂໍເອົາການບໍຣິການໄດ້ຢ່າງໃດ ?*
ໂທຫາພວກເຮົາໄດ້ຕາມເລກນຶ່ງຂອງຫລາຍເລກຢູ່ໃນປື້ມຄູ່ມືຫລືເຂົ້າທາງອອນລາຍນ໌ໄດ້ທີ່: www.dshs.wa.gov/dda/service-and-information-request.

*ຂ້າພະເຈົ້າຈະຊອກເອົາຜູ້ບໍຣິການໄດ້ຢ່າງໃດ?*
ຄຳຕອບ: ຕິດຕໍ່ຫາຜູ້ຈັດການເອກສານຂອງທ່ານ. ເຂົາເຈົ້າສາມາດເອົາໃຫ້ທ່ານລາຍຊື່ຂອງຜູ້ບໍຣິການທີ່ມີຄຸນນະວຸດທິຫລືສະເນີເຄື່ອງມືຊອກຫາເພື່ອຈະຊອກຫາຜູ້ບໍຣິການທີ່ມີຄຸນນະວຸດທິຢູ່ໃນເຂດຂອງທ່ານ.

*DDA ສະເນີການບໍຣິການຍາມພາວະສຸກເສີນ/ເຫດການສຸກເສີນບໍ່?*
ຖ້າຫາກວ່າທ່ານກຳລັງຢູ່ໃນການດຳເນີນການຮ້ອງຂໍເອົາເງື່ອນໄຂຮັບເອົາ DDA ຢູ່, DDA ອາດຈະສາມາດທີ່ຈະຊ່ວຍເຫລືອໄດ້ນຳການສົ່ງຕໍ່ໄປເອົາຣາຍຣະອຽດແລະການເຂົ້າຫາການບໍຣິການບາງຢ່າງໃນຂະນະທີ່ໃບຄຳຮ້ອງຂອງທ່ານກຳລັງຖືກກວດເບິ່ງຄືນຢູ່. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບ DDA ແລ້ວ,ຕິດຕໍ່ຫາຜູ້ຈັດການເອກສານຂອງທ່ານ.

*ການອູ້ມຊູແນວໃດແດ່ຈະມີໄວ້ໃຫ້ສຳລັບເດັກນ້ອຍອາຍຸຕ່ຳກວ່າສາມປີ?*
ການເຂົ້າແຊກແຊງນຳໃນຂັ້ນເລີ້ມແຣກໄດ້ຖືກເອົາໃຫ້ເປັນພາກສ່ວນນຶ່ງຂອງໂຄງການ Early Supports for Infants and ໃນການປະສານງານຮ່ວມມືນຳ Department of Early Learning ແລະຫ້ອງການນຳພາຂອງທ້ອງຖິ່ນ.ເພື່ອຈະຮູ້ຈັກເພີ້ມເຕີມອີກໃຫ້ໂທຫາສາຍດ່ວນ Family Health Hotline ໄດ້ທີ່ (800) 322-2588 ຫລື ເຂົ້າທາງອອນລາຍນ໌ໄດ້ທີ່:Parenthelp123.org. ສອບຖາມຜູ້ຈັດການເອກສານຂອງທ່ານຖ້າຫາກວ່າການບໍຣິການອື່ນໆອາດຈະມີໄວ້ໃຫ້ ຫລື ບໍ່.